

"ແມ່ເປັນຜູ້ໃຫ້ການເບິ່ງແຍງດູແລຕົ້ນຕໍ ແລະ ຮອບດ້ານຢູ່ສີ່ໃນສິບຄອບຄົວທີ່ມີເດັກນ້ອຍ....8.6 ລ້ານ (63%) ຄົນແມ່ນແມ່ດ່ຽວ (ຊິງເກີລມໍ່າ).

*- ສູນຄົ້ນຄວ້າປິວ (Pew Research Center)*

"ຜູ້ເຄາະຮ້າຍຈາກຄວາມຮຸນແຮງທາງເພດມັກຈະຜະເຊີນໜ້າກັບການຖືກຈຳແນກຄວາມແຕກຕ່າງທາງດ້ານທີ່ຢູ່ອາໄສຢູ່ເລື້ອຍໆເຊັ່ນ: ການໄລ່ອອກຈາກທີ່ຢູ່ອາໄສ ຫຼື ການປະຕິເສດບໍ່ໃຫ້ເຂົ້າມາຢູ່ອາໄສຕາມສະພາບຄວາມຮຸນແຮງທີ່ເຂົາເຈົ້າປະສົບມາ ຫຼື ການຖືກເຈົ້າຂອງທີ່ຢູ່ອາໄສ ແລະ ຜູ້ຈັດການທີ່ຢູ່ອາໄສລ່ວງລະເມີດທາງເພດ."

*-ສະມາຄົມເສລີພາບພົນລະເມືອງອາເມຣິກັນ (The American Civil Liberties Union)*

"ການຊອກຫາທີ່ຢູ່ອາໄສທີ່ປອດໄພ ແລະ ລາຄາທີ່ສາມາດຈ່າຍໄດ້ເປັນສ່ວນສຳຄັນຂອງບັນຫາຄວາມປອດໄພທາງດ້ານທີ່ຢູ່ອາໄສສຳລັບທຸກຄົນ, ແຕ່ແມ່ຍິງປະເພດສອງ (LGBT) ມັກຈະໄດ້ຈ່າຍໃນລາຄາທີ່ບໍ່ຍຸຕິທຳຢູ່ໃນຕະຫຼາດທີ່ຢູ່ອາໄສເນື່ອງຈາກຄວາມມັກທາງເພດ ຫຼື ການກຳນົດ/ການສະແດງອອກທາງເພດຂອງເຂົາເຈົ້າ."

*-ສູນໂຄງການຄວາມຄືບໜ້າ ແລະ ຄວາມກ້າວໜ້າໃນການເຄື່ອນໄຫວຂອງຄົນອາເມຣິກັນ (Center for American Progress & Movement Advancement Project)*

"ພວກເຮົາທຸກຄົນມີຜົນປະໂຫຍດທາງດ້ານສັງຄົມ, ການເມືອງ ແລະ ເສດຖະກິດຈາກຄວາມສະເໝີພາບຍິງ-ຊາຍຢູ່ໃນຊີວິດປະຈຳວັນຂອງພວກເຮົາ. ເມື່ອແມ່ຍິງໄດ້ຮັບອຳນາດ, ມະນຸດຊາດທັງໝົດໄດ້ຮັບຜົນປະໂຫຍດ. ຄວາມສະເໝີພາບຍິງ-ຊາຍບໍ່ພຽງແຕ່ໃຫ້ແມ່ຍິງມີອິດສະລະຈາກບົດບາດທາງສັງຄົມຕາມທີ່ກຳນົດມາກ່ອນ ແລະ ແນວຄວາມຄິດດັ້ງເດີມທາງເພດເທົ່ານັ້ນ, ແຕ່ຜູ້ຊາຍກໍ່ມີຄືກັນ."

*-ຜູ້ຊາຍເພື່ອແມ່ຍິງ (HeForShe)*
*ການເຄື່ອນໄຫວເຕົ້າໂຮມຄວາມສາມັກຄີຂອງອົງການຢູເອັນວີເມັນ ເພື່ອຄວາມສະເໝີພາບຍິງ-ຊາຍ (UN Women Solidarity Movement for Gender Equality)*

ຖ້າທ່ານຄິດວ່າ ທ່ານຖືກເລືອກປະຕິບັດຕໍ່ການດຳເນີນການດ້ານທີ່ຢູ່ອາໄສ, ໃຫ້ຕິດຕໍ່ຫາ:


ພັນທະມິດທີ່ຢູ່ອາໄສຍຸຕິທຳນອດເວັສ (Northwest Fair Housing Alliance)
35 W. Main Ave, Suite 250
Spokane, WA 99201

ໂທຣ: 509-325-2665
1-800-200-FAIR (3247)
ແຟັກ: 1-866-376-6308
**www.nwfairhouse.org**


ພວກເຮົາສາມາດແນະນຳທາງເລືອກຂອງທ່ານໃຫ້ທ່ານ ແລະ ໃຫ້ການສະໜັບສະໜູນທ່ານໄດ້. ການບໍລິການຂອງພວກເຮົາແມ່ນມີໃຫ້ຟຣີ. .

**HUD-ການພັດທະນາຕົວເມືອງ ແລະ ທີ່ຢູ່ອາໄສ**
**ອາລາສກ້າ, ໄອດາໂຮ, ໂອເຣກອນ ແລະ ວໍຊິງຕັນ**
1-(800)-877-0246 www.hud.gov

**ຄະນະກຳມະການສິດທິມະນຸດລັດວໍຊິງຕັນ**
1-800-233-3247 www.hum.wa.gov

**ສາຍດ່ວນຄວາມຮຸນແຮງພາຍໃນແຫ່ງຊາດ**
1-800-799-7233 ແລະ 1-800-787-3224 (TYY)
www.thehotline.org

**ໂຄງການສິດທິຂອງແມ່ຍິງເຊີແອວຢູ (ACLU Women's Rights Project)**
(212) 549-2644
www.aclu.org/womensrights


ວຽກທີ່ໃຫ້ເປັນພື້ນຖານສຳລັບການເຜີຍແຜ່ນີ້ໄດ້ຮັບການສະໜັບສະໜູນບາງສ່ວນໂດຍການໃຫ້ທຶນພາຍໃຕ້ທຶນຊ່ວຍເຫຼືອລ້າກັບກະຊວງເຄຫາສະຖານ ແລະ ການພັດທະນາຕົວເມືອງຂອງສະຫະລັດ. NWFHA ມີຄວາມຮັບຜິດຊອບຕໍ່ຄວາມຖືກຕ້ອງຂອງຄຳຖະແຫຼງ ແລະ ການແປຄວາມໝາຍທັງໝົດທີ່ມີຢູ່ໃນການເຜີຍແຜ່ນີ້. 3/16


# ແມ່ຍິງ ແລະ ທີ່ຢູ່ອາໄສທີ່ເປັນທຳ



## ການປົກປ້ອງການເຊົ່າ ຫຼື ການຊື້ບ້ານ

"ເຮືອນ ແລະ ບ້ານທີ່ປອດໄພ, ໝັ້ນຄົງ, ສາມາດຈ່າຍໄດ້ ແລະ ເໝາະສົມແມ່ນມາດຕະການໜຶ່ງຂອງຄຸນນະພາບຊີວິດ ທີ່ມະນຸດທຸກໆຄົນໄຝ່ຫາ."

*ແມ່ຍິງ ແລະ ທີ່ຢູ່ອາໄສ ໄປສູ່ເມືອງທີ່ກວາມເອົາທຸກຢ່າງ*
*ໂຄງການຕັ້ງຖິ່ນຖານຂອງມະນຸດຂອງສະຫະປະຊາຊາດ*


**ພັນທະມິດທີ່ຢູ່ອາໄສຍຸຕິທຳນອດເວັສ**
(NORTHWEST FAIR HOUSING ALLIANCE)

(509) 325-2665
1 (800) 200-FAIR (3247)
www.nwfairhouse.org

# ການເຊົ່າ



ຊອກຫາທີ່ຢູ່ອາໄສທີ່ທ່ານສາມາດຈ່າຍຊື້ໄດ້ຢູ່ໃນບ່ອນທີ່ທ່ານມັກ. ໄປເບິ່ງສະຖານທີ່ຫຼາຍຄັ້ງໃນເວລາຕ່າງກັນ ເພື່ອເບິ່ງວ່າ ສະພາບຂອງເພື່ອນບ້ານໄດ້ຕາມຄວາມຕ້ອງການຂອງທ່ານບໍ.

ເອົາເອກະສານ ແລະ ສັນຍາທີ່ຢູ່ອາໄສເປັນລາຍລັກອັກສອນ. ໃຫ້ເກັບສຳເນົາໄວ້ເປັນບັນທຶກຂອງທ່ານຢູ່ສະເໝີ (ຕົວຢ່າງ: ການໂຄສະນາ, ການໃຫ້ເຊົ່າ, ການດັດແກ້ເພີ່ມເຕີມ, ໃບຮັບເງິນຄ່າເຊົ່າ, ແຈ້ງການ, ໃບສະເໜີຂໍສ້ອມແປງ ແລະ ຄຳຮ້ອງຮຽນ).

## ຕົວຢ່າງຂອງການລະເມີດທີ່ຢູ່ອາໄສທີ່ເປັນທຳ:

- ມັນເປັນສິ່ງຜິດກົດໝາຍສຳລັບຜູ້ໃຫ້ບໍລິການທີ່ຢູ່ອາໄສທີ່ປະຕິເສດທີ່ຢູ່ອາໄສຂອງທ່ານ, ຫຼື ຍກເລີກການເຊົ່າຂອງທ່ານ ເພາະວ່າທ່ານ**ຖືພາ** ຫຼື ຈະຖືພາ.

- **ການລ່ວງລະເມີດທາງເພດ**ຈາກເຈົ້າຂອງທີ່ຢູ່ອາໄສ, ຜູ້ຈັດການ, ຫຼື ຝ່າຍບຳລຸງຮັກສາແມ່ນຜິດກົດໝາຍ. ການຮຽກເອົາການຕອບສະໜອງທາງເພດເພື່ອແລກປ່ຽນກັບການໄດ້ທີ່ຢູ່ອາໄສ, ການໃຫ້ຢູ່ຕໍ່, ຫຼື ເພື່ອແລກປ່ຽນໃຫ້ມີການສ້ອມແປງ, ການຊົດໃຊ້ຄ່າເສຍຫາຍ, ຫຼື ຄ່າເຊົ່າແມ່ນຜິດກົດໝາຍ. ຜູ້ຈັດການຍັງມີໜ້າທີ່ຮັບຜິດຊອບບໍ່ໃຫ້ມີການລ່ວງລະເມີດທາງເພດຂອງຜູ້ເຊົ່າຄົນອື່ນຢູ່ໃນທີ່ຢູ່ອາໄສ ແລະ ຕ້ອງແຈ້ງເລື່ອງໃຫ້ຜູ້ລ່ວງລະເມີດຮູ້ ລວມທັງການຍົກເລີກສັນຍາ ຖ້າຫາກຍັງມີການສືບຕໍ່ລ່ວງລະເມີດຢູ່.

- ການປະຕິເສດການເຊົ່າກັບຜູ້ຍິງ ຫຼື ການຍົກເລີກການເປັນຜູ້ເຊົ່າຂອງນາງ ເພາະວ່ານາງເປັນຜູ້ລອດຊີວິດຈາກ**ຄວາມຮຸນແຮງພາຍໃນ**ແມ່ນຜິດກົດໝາຍ.



# ໂຄງການຂອງລັດຖະບານກາງ: ເພດ

ກົດໝາຍທີ່ຢູ່ອາໄສທີ່ເປັນທຳຂອງລັດຖະບານກາງປົກປ້ອງບຸກຄົນບໍ່ໃຫ້ຖືກຈຳແນກຄວາມແຕກຕ່າງດ້ານທີ່ຢູ່ອາໄສເນື່ອງຈາກເພດ, ຫຼື ການກຳນົດທາງເພດ.



## ການປົກປ້ອງເພີ່ມເຕີມຂອງລັດຖະບານກາງ

**"ກົດລະບຽບການເຂົ້າເຖິງເທົ່າທຽມກັນ"** ປົກປ້ອງບຸກຄົນທີ່ເປັນ LGBT (ເລັສບ້ຽນ, ເກ, ຄົນສອງເພດ, ຄົນປ່ຽນເພດ) ຜູ້ທີ່ປະສົບກັບການຈຳແນກຄວາມແຕກຕ່າງທາງດ້ານທີ່ຢູ່ອາໄສຢູ່ໃນໂຄງການທີ່ຢູ່ອາໄສທົດແທນ ແລະ ກູ້ຢືມຂອງລັດຖະບານກາງ.

**ຄວາມຮຸນແຮງຕ້ານກົດລະບຽບການໃຫ້ສິດອະນຸຍາດແກ່ແມ່ຍິງຄືນໃໝ່** (VAWA) ຂະຫຍາຍການປົກປ້ອງທີ່ຢູ່ອາໄສໃຫ້ແກ່ຜູ້ລອດຊີວິດຈາກຄວາມຮຸນແຮງພາຍໃນ, ຄວາມຮຸນແຮງຈາກການເດດກັນ, ແລະ ຄວາມຮຸນແຮງທາງເພດ.

## ການປົກປ້ອງຂອງລັດວໍຊິງຕັນ

**ກົດໝາຍຕ້ານການຈຳແນກຄວາມແຕກຕ່າງຂອງລັດວໍຊິງຕັນ** (WLAD) ຫ້າມການຈຳແນກຄວາມແຕກຕ່າງບົນພື້ນຖານທາງເພດ, ຄວາມນິຍົມທາງເພດ, ແລະ ການກຳນົດທາງເພດ. ອັນນີ້ລວມມີການຫ້າມການຈຳແນກຄວາມແຕກຕ່າງຕໍ່ແມ່ຍິງຖືພານຳ.

# ຄວາມເປັນເຈົ້າຂອງບ້ານ



ກ່ອນທີ່ທ່ານຈະເລີ່ມຊອກຫາບ້ານ, ໃຫ້ຄົ້ນຄວ້າ**ທະນາຄານ** ແລະ ຜູ້ໃຫ້ກູ້ຢືມກ່ອນ. ທຳຄວາມຄຸ້ນເຄີຍກັບ**ເງິນກູ້**ທີ່ມີຢູ່ ແລະ ຂໍໜັງສືວ່າດ້ວຍເງື່ອນໄຂລ່ວງໜ້າຈາກຜູ້ໃຫ້ກູ້ຢືມຂອງທ່ານ. ທ່ານບໍ່ຈຳເປັນຕ້ອງຊື້ບ້ານດ້ວຍລາຄາເຕັມ, ແຕ່ໃຫ້ຮູ້ຈັກທາງເລືອກຂອງທ່ານ.

ຢູ່ໃນລັດວໍຊິງຕັນ, ບໍ່ວ່າທ່ານຈະເປັນຜູ້ຍິງໂສດ, ມີຄູ່ແລ້ວ, ແຕ່ງງານແລ້ວ, ປະຮ້າງແລ້ວ, ເປັນແມ່ໝ້າຍ, ເປັນເພດປົກກະຕິ, ເປັນຍິງປະເພດສອງ (LGBT), ຖືພາ, ເປັນແມ່ ຫຼື ບໍ່ເປັນແມ່, ຜູ້ໃຫ້ກູ້ຢືມຕ້ອງປະຕິບັດຕໍ່ທ່ານຄືກັບຜູ້ສະໝັກອື່ນໆ ໃນຂະນະທີ່ດຳເນີນຂັ້ນຕອນ**ຄຳຮ້ອງຂໍ**ເງິນກູ້ຂອງທ່ານ.

ສຳພາດ**ຕົວແທນອະສັງຫາລິມມະຊັບ**. ຖາມໝູ່ ແລະ ຄອບຄົວ ເພື່ອຂໍການແນະນຳຕໍ່ໄປຫາຕົວແທນທີ່ເຂົາເຈົ້າໄດ້ນຳໃຊ້ ແລະ ມັກ ແລະ ຊອກຫາບຸກຄົນຜູ້ທີ່ເໝາະສົມສຳລັບທ່ານ.

ເລືອກ**ບ້ານ**ທີ່ທ່ານມັກ, ໄດ້ຕາມຄວາມຕ້ອງການຂອງທ່ານ, ແລະ ທ່ານສາມາດຈ່າຍຊື້ໄດ້. ມັນເປັນສິ່ງທີ່ຜິດກົດໝາຍສຳລັບຄົນທີ່ທ່ານຊ່ວຍທ່ານຊອກຫາບ້ານເພື່ອແນະນຳທ່ານໄປຫາບ່ອນທີ່ "ທ່ານອາດຈະມີຄວາມສະດວກສະບາຍເພີ່ມຂຶ້ນ" ຫຼື "ບ່ອນນີ່ທີ່ມີຫຼາຍຄົນຄືກັນກັບທ່ານ."

## ຕົວຢ່າງຂອງການລະເມີດທີ່ຢູ່ອາໄສທີ່ເປັນທຳ:

- ຖ້າທ່ານຖືພາ ແລະ ກຳລັງຂໍເງິນກູ້ຊື້ບ້ານ, ທະນາຄານ ຫຼື ຜູ້ໃຫ້ກູ້ຢືມອາດຈະປະຕິເສດເງິນກູ້ໃຫ້ທ່ານ ເພາະວ່າທ່ານກຳລັງຈະ**ລາພັກເກີດລູກ** ຫຼື ແກ່ຍາວໃນການໃຫ້ເງິນກູ້ແກ່ທ່ານຈົນກວ່າທ່ານກັບຄືນມາເຮັດວຽກ.
- ໃຫ້ການສະເໜີລາຄາ**ປະກັນໄພ**ສູງ—ການສະເໜີລາຄາໃຫ້ຄວນອີງຕາມຄຸນລັກສະນະຂອງບ້ານ ບໍ່ແມ່ນຕາມເພດ ຫຼື ການກຳນົດທາງເພດ. ຈົ່ງປຽບທຽບລາຄາ.